ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 14:
## The story of Thao Chanthakhad (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 5:** ໜັງສືເລື່ອງ: "ທ້າວຈັນທະຄາດ" (ຕໍ່)
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ວິເຄາະຕົວລະຄອນ<br>- ສິລະປະໃນການແຕ່ງ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ການວິເຄາະຕົວລະຄອນສິນທຳ ແລະ ອະທຳ<br>- ສິລະປະການປະດິດແຕ່ງເລື່ອງ</td><td>ຄຳຖາມຫຼັກ (Questions):<br>1) ຕົວລະຄອນສິນທຳ ແລະ ຕົວລະຄອນອະທຳມີຕົວລະຄອນໃດແດ່?<br>2) ສິລະປະການປະດິດແຕ່ງໜັງສືເລື່ອງ "ທ້າວຈັນທະຄາດ" ເປັນແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງຕົວລະຄອນສິທຳ, ອະທຳ ແລະ ສິລະປະການປະດິດແຕ່ງເລື່ອງ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງຕົວລະຄອນ ແລະ ສິລະປະການແຕ່ງຂອງໜັງສືເລື່ອງ "ທ້າວຈັນທະຄາດ".</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
<tr><td colspan="2">- ສື່ການສອນມີ:<br>ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມໜັງສືເລື່ອງ ທ້າວຈັນທະຄາດ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.</td></tr>
</table>

- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນຂອງໜັງສືເລື່ອງ "ທ້າວຈັນທະຄາດ" ໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 5**

**ໜັງສືເລື່ອງ: "ທ້າວຈັນທະຄາດ"**

**5.3 ການວິເຄາະຕົວລະຄອນ** (45 ນາທີ)

**ກິດຈະກາ 1:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ຕົວລະຄອນສິນທຳ ແລະ ຕົວລະຄອນອະທຳມີຕົວລະຄອນໃດແດ່?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (40 ນາທີ)

**ຕົວລະຄອນສິນທຳມີ:**

**1) ຕົວລະຄອນ ທ້າວຈັນທະຄາດ ແລະ ສຸລິຍະຄາດ**

ທ້າວ ຈັນທະຄາດ ແລະ ສຸລິຍະຄາດ ໄດ້ກຳເນີດໃນຄອບຄົວທີ່ທຸກຈົນ, ຈຶ່ງໄດ້ພັດຖິ່ນພະເນຈອນເພື່ອເອົາຊີວິດລອດ, ພວກທ້າວທັງສອງໄດ້ເຄື່ອນໄຫວດຳລົງຊີວິດດ້ວຍເຫື່ອແຮງ, ສະຕິປັນຍາ, ຄວາມສະຫຼາດ ແລະ ບົດຮຽນຂອງຕົນ, ພວກທ້າວເປັນຜູ້ທີ່ມີນ້ຳໃຈມະນຸດສະທຳ, ຊື່ສັດບໍລິສຸດ, ມີຄວາມເອື້ອເຟື້ອ ແລະ ຮັກຫອມຊີວິດຂອງຄົນທົ່ວໄປເໝືອນກັບຊີວິດຂອງຕົນເອງ. ພວກທ້າວໄດ້ດຳເນີນຊີວິດໄປຕາມເສັ້ນທາງທີ່ຖືກຕ້ອງ ແລະ ເປັນທຳ, ມີຄວາມເມດຕາກະລຸນາຕໍ່ຊີວິດຂອງຄົນ ແລະ ສັດເຊິ່ງມັນສະແດງອອກໃນເລື່ອງເຊັ່ນ: ຊ່ວຍເຫຼືອຊີວິດຂອງກາດຳ, ເມຍຍັກ, ພະຫອນ ແລະ ຊ່ວຍເຫຼືອພະຍາເມືອງຕ່າງໆພ້ອມດ້ວຍລູກໆຂອງພວກເຂົາ.

ຈາກນັ້ນ ສອງອ້າຍນ້ອງຍັງຮັກຫອມສາຍເລືອດດຽວກັນ, ບໍ່ລືມຊາດ ແລະ ບ່ອນຢືນຂອງຕົນເອງ, ຊີວິດພັດຖິ່ນຂອງສອງອ້າຍນ້ອງສ່ວນຫຼາຍແມ່ນຂໍທານກິນ, ຈາກບົດຮຽນຕົວຈິງໃນສັງຄົມ ແລະ ຊີວິດຕິດພັນກັບປະຊາຊົນຄືແນວນັ້ນໄດ້ເຮັດໃຫ້ພວກທ້າວເປັນຄົນດີ, ມີບົດຮຽນອັນອຸດົມສົມບູນເຂົາເຈົ້າໄດ້ໝູນໃຊ້ບົດຮຽນດັ່ງກ່າວນັ້ນຮັບໃຊ້ປະຊາຊົນ, ຊີວິດພັດຖິ່ນຂອງທ້າວ ສຸລິຍະຄາດ ໄດ້ຢຸດຢູ່ເມືອງກາສີ. ສ່ວນທ້າວ ຈັນທະຄາດ ຊີວິດໄດ້ແກ່ຍາວຈົນຮອດທ້າຍຊີວິດ. ນັບແຕ່ຊີວິດພະເນຈອນເປັນຕົ້ນມາ ທ້າວໄດ້ໄປຕາມຈິດໃຈມະນຸດສະທຳຂອງຕົນມີຄວາມສົງສານຕໍ່ຊີວິດຂອງສັດສາວາສິ່ງຕະຫຼອດເຖິງມະນຸດດ້ວຍກັນ. ຕົວລະຄອນທ້າວ ຈັນທະຄາດ ເປັນຕົວລະຄອນທີ່ມີບ່ອນຢືນຢ່າງຈະແຈ້ງ, ບໍ່ລືມຖານະຊາດຕະກຸນຂອງຕົນເອງ, ບໍ່ອິດສາບັງບຽດຜູ້ອື່ນເວລາໃດກໍຖືຕົນເອງຕໍ່າກວ່າຜູ້ອື່ນເຊິ່ງ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ສະແດງອອກໃນຄຳເວົ້າຂອງທ້າວຕໍ່ພະຍາໃນເວລາທີ່ທ້າວໄດ້ໂຜດເອົານາງ ເທວະທີສີງກາ. ພະຍາເມືອງ ແລະ ເສນາອາມາດເຫັນດີມອບນາງໃຫ້ແກ່ທ້າວ ແຕ່ທ້າວໄດ້ເວົ້າວ່າ:

ຂ້ານີ້ ແນວຊາດເຊື້ອ ຄົນນ້ອຍບໍ່ສົມ ພະເອີຍ
ປຽບດັ່ງກາດຳຮ້າຍ ເດຍລະສານສັດຖ່ອຍ
ລືຈັກລີງອາບນໍ້າ ອະນົບແກ້ວຫ່ອມຄວນ ພະເອີຍ
ໄວ້ແກ່ລາສະສີພ້ອມ ຫົງຄຳລີງອາບ
ຂ້ານີ້ ສົມແຕ່ລີງອາບນໍ້າ ໃນຫ້ວຍບອກຄວາຍ ນັ້ນແລ້ວ

(ທຸມພັນ ລັດຕະນະວົງ, 1990).

ດ້ານຄວາມເກັ່ງກ້າສາມາດ ທ້າວໄດ້ຊ່ວຍນາງ ພົມມະຈາລີ ຕໍ່ສູ້ກັບພະຍາໄພສານຈົນໄດ້ຮັບໄຊຊະນະ, ອັນທີ່ເດັ່ນແມ່ນໄດ້ຊ່ວຍເທດທານົບ (ພໍ່ເຖົ້າ) ຕີຕ້ານການຮຸກຮານຂອງພະຍາພັນທຸລາຢ່າງມີໄຊ.

ດ້ານຄວາມຊື່ສັດບໍລິສຸດການຮັກລູກຖະໜອມເມຍຂອງທ້າວກໍເດັ່ນ ເຖິງວ່າທ້າວໄດ້ພັດພາກຈາກເມຍແຕ່ທ້າວກໍຍັງມີຄວາມເປັນຫ່ວງເປັນໄຍ, ຄິດເຖິງເມຍ ແລະ ພະຍາຍາມຊອກຫາເມືອງຈົນພົບ.

ທ້າວ ໄດ້ມີນໍ້າໃຈອົດທົນຜ່ານຜ່າຄວາມຫຍຸ້ງຍາກບົນເສັ້ນທາງດຳເນີນໄປແຫ່ງຊີວິດ ທ້າວໄດ້ຜ່ານຜ່າຫຼາຍເຫດການ ແລະ ໄດ້ຮ່ຳຮຽນເອົາສິ່ງທີ່ມີປະໂຫຍດເພື່ອຮັບໃຊ້ສຳລັບຕົນ ແລະ ມວນຊົນ. ນອກຈາກທ້າວມີຄວາມເກັ່ງກ້າສາມາດດ້ານສາດຕະສິນ ແລະ ການຕໍ່ສູ້ແລ້ວ ທ້າວຍັງເປັນໝໍຢາພິເສດທີ່ມີຊື່ສຽງໂດ່ງດັງ, ໃນຜົນງານຕ່າງໆທີ່ກ່າວມານີ້ຈຶ່ງເຮັດໃຫ້ທ້າວໄດ້ຮັບຄວາມສຸກໃນຂັ້ນຕໍ່ມາ ແລະ ທ້າວກໍໄດ້ກາຍເປັນພະຍາປົກຄອງຢ່າງມີຄວາມສຸກ. ສະນັ້ນ, ຕົວລະຄອນທ້າວ ຈັນທະຄາດຈຶ່ງເປັນຕົວລະຄອນອຸດົມຄະຕິຂອງຊົນຊັ້ນສັກດີນາ.

### 2) ຕົວລະຄອນນາງ ພົມມະຈາລີ

ຕົວລະຄອນນາງພົມມະຈາລີ ເປັນຕົວແທນໃຫ້ແກ່ເພດຍິງໃນສັງຄົມສະໄໝສັກດີນາ ນາງເປັນຜູ້ທີ່ມີຄວາມເກັ່ງກ້າສາມາດໃນການຕໍ່ສູ້ກູ້ຊາດ ສິ່ງທີ່ປຸກລະດົມນໍ້າໃຈພິລະອາດຫານຂອງນາງ ພົມມະຈາລີ ແມ່ນຄວາມຄຽດແຄ້ນທີ່ພະຍາສຸດທະຈັກໄດ້ກະທຳຕໍ່ນາງ. ນາງບໍ່ຍອມເປັນເມຍນ້ອຍຫ້ອຍເມຍປາຍຂອງຜູ້ໃດ ດັ່ງຄຳກອນທີ່ວ່າ:

ຫາກບໍ່ສັນຫາດັ້ງ ໃຈເຈັບສຽບຕາມຊ່າງ ກໍໃຈທ້ອນ
ຊາດທີ່ເຊື້ອໜໍ່ຟ້າ ຊິເປັນນ້ອຍແຫ່ງໃຜ ນີ້ເດ
ກໍຈັກເອື້ອອາຍໜ້າ ຝູງໄທຊີ້ງ່ອນ
ເຂົາຊິວ່າໝາແມ່ນ້ອຍ ນຳແຫ້ນກະດູກຄວາຍ ນັ້ນແລ້ວ

(ທຸມພັນ ລັດຕະນະວົງ, 1990).

ນາງໄດ້ຕ້ານຄືນຜົວເກົ່າຢ່າງສຸດຂີດສຸດທ້າຍກໍຖືກພະຍາສຸດທະຈັກເອົາໃສ່ແພໄຫຼນໍ້າໄປ. ບໍ່ພຽງແຕ່ເທົ່ານັ້ນນາງຍັງໄດ້ຕ້ານຄືນຕໍ່ການຮຸກຮານຂອງພະຍາໄພສານ ຈົນໄດ້ຮັບໄຊຊະນະ, ນີ້ມັນແມ່ນການກະທຳທີ່ມີກຽດອັນສະ ງ່າ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ງາມຂອງນາງ. ສະນັ້ນ ເຮົາສາມາດເວົ້າໄດ້ວ່າ: ຢູ່ໃນປະຫວັດວັນນະຄະດີສະໄໝສັງຄົມສັກດີນາ ນາງ ພິມມະ ຈາລີ ແມ່ນຮູບພາບແມ່ນຍິງລາວຜູ້ອົງອາດກ້າຫານໃນການຕໍ່ສູ້ຕ້ານກັບສັດຕູຜູ້ຮຸກຮານ, ນາງໄດ້ຮັກສາມູນເຊື້ອອັນອົງອາດກ້າຫານນັ້ນໄວ້, ການເຄື່ອນໄຫວຂອງນາງແມ່ນທຽບເທົ່າກັບເພດຊາຍ ມືຂອງນາງກຳດາບກວດແກວ່ງຢູ່ເທິງຄໍຊ້າງ ເພື່ອສູ້ຮົບ ນາງສາມາດຂ້າພະຍາສຸດທະຈັກຕາຍຄາສະໜາມຮົບດັ່ງບາງຕອນຢູ່ໃນເລື່ອງວ່າ:

ແຕ່ນັ້ນ ຫຼາຍຂຸນທ້າວ ສຸມແຮງພັນຜ່າ<br>
ກໍຈິ່ງເສຍທ່ານເຈົ້າ ຕາຍຊໍ້າເພາະກຳ ແທ້ແລ້ວ<br>
ນາງກໍຟັນຟອຍຊໍ້າ ຫົວພະຍາສະເດັນຂາດ<br>
ຄິດເມື່ອ ປາງກ່ອນພຸ້ນ ກະທຳຮ້າຍແກ່ກູ<br>
ອັນນີ້ມືກູແລ້ວ ຄືນມາສະໜອງຕອບ ມຶງແລ້ວ<br>
ມຶງຮູ້ມຸດມອດມ້ຽນ ຕາຍຊໍ້າຊາກຕາວ ແທ້ນໍ

(ທຸມພັນ ລັດຕະນະວົງ, 1990).

ຜ່ານຕົວລະຄອນນາງ ພິມມະຈາລີ ພວກເຮົາເຫັນໄດ້ວ່າ ມັນເປັນສິ່ງທັບມ້າງ ແລະຕ້ານຄືນກັບພວກທີ່ໝິ່ນປະໝາດເພດຍິງວ່າ: ເປັນຄົນອ່ອນແອ, ເປັນພຽງແຕ່ເຄື່ອງບຳເລີໃຫ້ແກ່ສັງຄົມ. ລວມຄວາມແລ້ວຮູບພາບຂອງນາງ ພິມມະຈາລີ ແມ່ນຮູບພາບທີ່ສວຍງາມ, ດີເດັ່ນໃນວັນນະຄະດີສະໄໝນີ້. ນາງເປັນຜູ້ທີ່ມີຄວາມນິ້ມນວນອ່ອນຫວານຕໍ່ເສນາອາມາດ, ເວລາສູ້ຮົບຕົບຕີນາງກໍແມ່ນຜູ້ໜຶ່ງທີ່ເກັ່ງກ້າ ມັນສະແດງເຖິງມູນເຊື້ອວິລະຊົນຜູ້ອົງອາດກ້າຫານຂອງຊາດລາວ. ຮູບພາບຂອງນາງ ພິມມະຈາລີ ມາເຖິງປັດຈຸບັນຍັງຈີບງາມເໝືອນດັ່ງດອກບົວທີ່ເກີດຢູ່ກາງໜອງ ເຖິງວ່າຕົມຈະປົກຫຸ້ມແຕ່ກໍຍັງມີກິ່ນຫອມຫວນ ແລະ ສວຍງາມຢູ່ສະເໝີ. ນັກແຕ່ງໄດ້ຍົກເອົາຮູບພາບອັນສວຍງາມຂອງນາງ ພິມມະຈາລີ ເຂົ້າໃນບົດວັນນະຄະດີເພື່ອກໍ່ສ້າງຄວາມດູດດື່ມຕໍ່ຜູ້ອ່ານ ແລະຜູ້ຟັງນອກຈາກນັ້ນ ນັກແຕ່ງຍັງຍົກຍ້ອງຄວາມສາມາດຂອງເພດຍິງນັກແຕ່ເຊື່ອໝັ້ນວ່າເພດຍິງກໍມີການເຄື່ອນໄຫວເທົ່າທຽມກັນກັບສັງຄົມ.

**3) ຕົວລະຄອນນາງເທວະທິສິງການ ແລະ ນາງຄຳຜິວ**

ເປັນຕົວແທນໃຫ້ແກ່ເພດຍິງທີ່ມີຄວາມຊື່ສັດສຸຈະລິດຕໍ່ລູກຕໍ່ຜົວມັນສະແດງອອກຕອນຜົວຂອງນາງ ເທວະທິສິງການຊິໄປຢ້າມອ້າຍທີ່ເມືອງກາສີ ນາງ ເທວະທິສິງການກໍຂໍຕິດຕາມໄປນຳ. ແຕ່ຍ້ອນຖືກອຸປະຕິເຫດຂອງລົມພາຍຸພັດຢ່າງແຮງຈຶ່ງເຮັດໃຫ້ສະເພົາແຕກເຄິ່ງກາງດັ່ງນັ້ນ ຜົວ ແລະ ເມຍຈຶ່ງໄດ້ແຍກກັນ. ທ້າວ ຈັນທະຄາດຂຶ້ນຝັ່ງໄດ້ກໍເດີນທາງໄປຕາມພູຜາປ່າເລິກ ສ່ວນນາງ ເທວະທິສິງການໄດ້ໄປຕົກໃສ່ເມືອງສຸດທະຈັກ ແລະ ໄດ້ອາໄສຢູ່ນຳຢ່າຈຳສວນທີ່ເມືອງນັ້ນພະຍາສຸດທະຈັກເຫັນກໍຫຼົງໄຫຼນຳຄວາມງາມຂອງນາງ ແລະພະຍາຍາມເຂົ້າຫານາງ ເພື່ອຫວັງເອົານາງມາເປັນມະເຫສີ ແຕ່ວ່າ ນາງ ເທວະທິສິງການໄດ້ປະຕິເສດສຸດຂີດໃນທີ່ສຸດນາງກໍ່ໄດ້ຕັດສິນໃຈເຂົ້າບວດເປັນຊີຈຳສິນຢູ່ວັດເພື່ອລໍຖ້າພີບົວຂອງນາງດັ່ງຄຳກອນທີ່ວ່າ:

ບັດນີ້ ຈັກກ່າວເຖິງເທວະທິສິງການນ້ອຍ ເຊົາເຮືອນດອມຍ່າ ກ່ອນແລ້ວ<br>
ກໍທໍ່ຄິດຮອດເຈົ້າ ຫົວລະຄົກໄກອົກ<br>
ກໍຈິ່ງເປັນທຸກສິນ ລົກໂພຍຝູງຮ້າຍ (ທຸມພັນ ລັດຕະນະວົງ, 1990).

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ນີ້ມັນສະແດງເຖິງຄວາມຊື່ສັດບໍລິສຸດຂອງນາງທີ່ມີຕໍ່ຜົວ. ສ່ວນນາງຄຳຜົວກໍແມ່ນຜູ້ໜຶ່ງທີ່ມີຄວາມຊື່ສັດຕໍ່ລູກຕໍ່ຜົວເມື່ອຜົວແຕ່ງຕັ້ງໃຫ້ຢູ່ກັບລູກທີ່ເມືອງສຸດທະຈັກນາງກໍໄດ້ຢູ່ນຳລູກຕະຫຼອດຊີວິດ. ນາງ ເທວະທິສິງການ ແລະ ນາງຄຳຜົວແມ່ນຮັກສາໄດ້ຄວາມຮັກແພງສາມັກຄີເຊິ່ງກັນ ແລະ ກັນ. ນອກຈາກຄວາມສາມັກຄີແລ້ວ ພວກນາງກໍເປັນຜູ້ທີ່ຮັກສາບ້ານເກີດເມືອງນອນ ແລະ ບໍ່ລືມຊາດຕະກຸນຂອງຕົນສະແດງອອກໃນເວລາມີສັດຕູຈະມາຮານຮາວີບ້ານເມືອງຂອງຕົນ ພວກນາງກໍມີຄວາມເປັນຫ່ວງເປັນໄຍນຳ ດັ່ງຄຳກອນທີ່ວ່າ:

ນາງກໍຟັງເຂົ້າຕ້ານ ຄຳຈິງແຈງແຈບ
ຄຶດຮອດພໍ່ແມ່ເຈົ້າ ທວງກັ້ນເກືອບກະຫາຍ
ນາງກໍຕີອົກໄຫ້ ຄືນດຽວທຶດທອດ
ຊົນລະເຍດຍ້ອຍ ຮຳໜ້າຫຸ່ມແຖວ

(ທຸມພັນ ລັດຕະນະວົງ, 1990).

**4) ຕົວລະຄອນພະຍາອິນ**

ຕົວລະຄອນພະຍາອິນເປັນຕົວລະຄອນປະກອບສ້າງໃຫ້ບົດເລື່ອງມີບັນຍາກາດ ແລະ ເປັນຜູ້ເນລະມິດໃຫ້ງູເຫົ່າໄລ່ກັດຕອດກັບຈອນຟອນເພື່ອຢາກບອກຢາວິເສດໃຫ້ກັບທ້າວຈັນທະຄາດ ແລະ ສຸລິຍະຄາດມາປິ່ນປົວຄົນ ແລະ ສັດ ຈາກນັ້ນຍັງໄດ້ເນລະມິດໃຫ້ເປັນໂຕກາດຳບິນມາຕົກຕາຍຢູ່ໃກ້ພວກທ້າວ, ເຮັດຍັກຕີກັບພະຍາທອນ ແລະ ເຮັດໃຫ້ພະຍາທອນຕີກັບຮຸ້ງເພື່ອເຮັດພວກທ້າວປິ່ນປົວເອົາສັດເຫຼົ່ານັ້ນຄືນມາ ແລະ ເປັນຜູ້ຊ່ວຍໃຫ້ພວກທ້າວໄດ້ຫຼຸດພົ້ນອອກຈາກຄວາມທຸກຍາກ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**<u>ຕົວລະຄອນອະທຳມີ:</u>**

**1) ຕົວລະຄອນສຸດທະຈັກ**

ພະຍາສຸດທະຈັກປົກຄອງເມືອງສຸດທະຈັກ ຢູ່ຕໍ່ມາກໍໄດ້ແຕ່ງເສນາອາມາດມາຂໍເອົານາງ ພິມມະຈາລີຢູ່ເມືອງອະນຸລາດ ມາເປັນມະເຫສີ. ຫຼັງຈານນັ້ນນາງ ພິມມະຈາລີ ກໍຕົກລົງມາເປັນມະເຫສີຂອງເມືອງສຸດທະຈັກ ພໍມາຢູ່ຮ່ວມກັນໄດ້ 7 ວັນ ພະຍາສຸດທະຈັກກໍເກີດມີຄວາມຫຼົງໄຫຼພໍອົກພໍໃຈກັບນາງ ເທວະທິສິງການ ທີ່ໄຫຼນໍ້າມາພັກຢູ່ນຳຍ່າຈຳສອນນັ້ນ ແລະ ຫວັງຢາກໄດ້ນາງ ເທວະທິສິງການມາເປັນເມຍໃຫຍ່ ດັ່ງພະຍາສຸດທະຈັກເວົ້ານຳນາງ ພິມມະຈາລີວ່າ:

ບັດນີ້ ຂ້ອຍຈັກໂສມເອົານາງ ໃໝ່ມາຮຽກຊ້ອນ
ແລ້ວຈັກ ເອົາອອນໄວ້ ເປັນປາຍໃນຊ່ອງ
ອັນວ່າ ຂອງໃໝ່ໄວ້ ເປັນເຄົ້າແທບທຽມ... (ທຸມພັນ ລັດຕະນະວົງ, 1990).

ຕໍ່ກັບບັນຫານີ້ ໄດ້ເຮັດໃຫ້ນາງ ພິມມະຈາລີບໍ່ພໍໃຈ ແລະ ໄດ້ໂຕ້ຖຽງກັນ ໃນທີ່ສຸດ ພະຍາສຸດທະຈັກກໍໄດ້ເອົານາງ ພິມມະຈາລີໃສ່ແພໄຫຼນໍ້າໄປ. ເຮົາອາດເວົ້າໄດ້ວ່າ ພະຍາສຸດທະຈັກໄດ້ກະທຳຜິດຕໍ່ກັບຮີດຄອງປະເພນີ, ຕໍ່ຮີດຜົວຄອງເມຍ ແລະ ກາຍເປັນກຳລັງອະທຳຢູ່ໃນສັງຄົມ ສະໄໝສັກດີນາ.

**2) ຕົວລະຄອນກາດຳ**

ໂຕກາດຳ ເປັນຕົວລະຄອນປະກອບ ມັນໄດ້ກິນໝາກໄມ້ແຄ້ນຕາຍໄປເທື່ອໜຶ່ງແລ້ວ, ຍ້ອນທ້າວຈັນທະຄາດ ແລະ ສຸລິຍະຄາດຊ່ວຍເຫຼືອເອົາຊີວິດໄວ້ຈຶ່ງຄືນມາ ຫຼັງຈາກນັ້ນກາດຳໂຕນີ້ກໍໄດ້ຕອບບຸນແທນຄຸນພວກທ້າວໄລຍະໜຶ່ງ. ຢູ່ຕໍ່ມາບໍ່ພໍເທົ່າໃດ ກາດຳກໍມີແນວຄິດອິດສາບັງບຽດພວກທ້າວ ຈັນທະຄາດ ຫວັງຢາກໃຫ້ພວກທ້າວຕາຍເພາະວ່າຕົນເອງຈະໄດ້ກິນຢູ່ຜູ້ດຽວຕາມລຳພັງເມື່ອຄິດໄດ້ຄືແນວນີ້ມັນຈຶ່ງບິນເຂົ້າໄປລັກເອົາຊີ້ນແຫ້ງຂອງຍັກເຖົ້າທີ່ຕາກໄວ້ເທິງຫຼັງຄາມາໃຫ້ພວກທ້າວເພື່ອຫວັງຢາກໃຫ້ຍັກເອົາພວກທ້າວໄປກິນ. ມັນໄດໃຊ້ແຜນຄືເຮັດຊີ້ນແຫ້ງຕົກລົງຕໍ່ໜ້າພວກທ້າວແລ້ວກໍທຳທ່າບິນໜີໄປບໍ່ພໍດາວກາໂຕນັ້ນກໍຖືກຍັກເຖົ້າເອົາກ້ອນຫີນແບ່ນໃສ່ກົກປີກກໍເລີຍຕາຍຊໍ້າ. ນັ້ນແມ່ນການທີ່ຢາກຂ້າເພິ່ນແລ້ວແຕ່ໂຕຕາຍ.

**5.4 ສິລະປະໃນແຕ່ງ** (15 ນາທີ)

<u>**ກິດຈະກຳ 2:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ສິລະປະການປະດິດແຕ່ງໜັງສືເລື່ອງ “ທ້າວຈັນທະຄາດ” ເປັນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

**1. ການສ້າງໂຄງຮ່າງປະກອບເລື່ອງ**

ໃນເລື່ອງນີ້ເພິ່ນໄດ້ອີງໃສ່ທິດສະດີຂອງສາສະໜາເຊິ່ງມີການເຊື່ອຖືຕ່າງໆເຮັດໃຫ້ບັນດາຕົວລະຄອນໄດ້ເຄື່ອນໄຫວໃນທາງທີ່ດີ ແລະ ບໍ່ດີ. ນັກແຕ່ງໄດ້ສ້າງຕົວລະຄອນທ້າວ ຈັນທະຄາດ ໂດຍອາໄສເຄົ້າເລື່ອງຈາກຊາດົກມາໝູນໃຊ້ເປັນເລື່ອງຂອງລາວ ແລະ ອີງຕາມແນວຄິດຂອງນັກແຕ່ງເຊິ່ງລ້ວນແຕ່ມີການກຳເນີດມາຈາກຖັນແຖວຊາວວັດແຫ່ງສາສະໜາພຸດ. ທ້າວ ຈັນທະຄາດ ກຳເນີດໃນຄອບຄົວທີ່ທຸກຈົນ ແຕ່ສຸດທ້າຍ ກໍໄດ້ກາຍເປັນພະຍາປົກຄອງເມືອງເຊິ່ງບໍ່ຕ່າງຫຍັງກັບນິທານຈຳພວກກຳພ້າຕ່າງໆ. ວາດການປະດິດແຕ່ງເປັນກອນອ່ານທຳມະດາ.

**2. ການສ້າງຕົວລະຄອນ**

ການສ້າງຕົວລະຄອນໃນບົດເລື່ອງມີສອງສາຍຕົວລະຄອນຄື: ຕົວລະຄອນຝ່າຍສິນທຳ ແລະຕົວລະຄອນຝ່າຍອະທຳແຕ່ວ່າຕົວລະຄອນສ່ວນຫຼາຍແມ່ນຊົນຊັ້ນເທິງ.

ຕົວຢ່າງ: ຕົວລະຄອນທ້າວ ຈັນທະຄາດ ເຖິງວ່າຈະເປັນຜູ້ທີ່ທຸກຍາກ ແຕ່ວ່າຍ້ອນຄວາມອົດທົນຕໍ່ຄວາມລຳບາກຫຼາຍໆຢ່າງສຸດທ້າຍໄດ້ເປັນພະຍາປົກຄອງເມືອງ.

**3. ການໃຊ້ສັບພາສາທີ່ມີຮູບແບບ**

ວາດການປະດິດແຕ່ງແມ່ນເປັນກອນອ່ານທຳມະດາ. ການໃຊ້ສັບພາສາຂອງນັກແຕ່ງບາງບ່ອນກໍເປັນສັບພາສາທຳມະດາເຂົ້າໃຈງ່າຍເຊິ່ງມັນເປັນຄຳສັບທີ່ປະຊາຊົນເຄີຍໃຊ້ມາກ່ອນແລ້ວ ແລະ ເປັນຄຳສັບທີ່ມີຮູບພາບເຄີຍພົບເຫັນໃນຊີວິດປະຈຳວັນດັ່ງຄຳວ່າ: ເດຍລະສານ, ລາຊະສີ, ຫົງຄຳ... ການໃຊ້ສັບພາສາສ່ວນຫຼາຍແມ່ນມີຮູບພາບ, ມີຄວາມໝາຍ ແລະ ມີເນື້ອໃນເລິກເຊິ່ງແຕ່ບາງບ່ອນກໍມີສັບສູງ (ລາຊາສັບ) ເຮັດໃຫ້ອ່ານແລ້ວເຂົ້າໃຈຍາກ.

ຕົວຢ່າງ: ໃຊ້ສັບພາສາທີ່ເປັນຮູບພາບ:

ມົ້ມປາກຖ້ຳ ເຖິງທີ່ແຄມຊົມ

ຫຼຽງເຫັນ ຊອນລອນລຽນ ປ່າເຕີຍແຄມຫ້ວຍ

ມີທັງບົງຊາຍເຣັຍ ເປັນຖັນແຄມຝັງ... (ຫຸມພັນ ລັດຕະນະວົງ, 1990).

**4. ການອາດພາບພາຍໃນຈິດ**

ການອາດພາບພາຍໃນຈິດຂອງຕົວລະຄອນແມ່ນດີເດັ່ນເຊັ່ນ: ການເວົ້າເຖິງຄວາມໂສກເສົ້າ, ຄວາມຄຽດແຄ້ນ ແມ່ນສະແດງອອກຈາກດວງໃຈແລ້ວພາໃຫ້ກາຍເປັນບ່ອນກະທຳ

**ຕົວຢ່າງ:** ຂ້ອຍກໍຟັງເຂົາເວົ້າ ຄຳຈິງແຈງແຈບ

ຄິດຮອດພໍ່ແມ່ເຈົ້າ ທວງກັ້ນເກື່ອນກະຫາຍ

ນາງກໍຕີອົກໄຫ້ ຄືນດຽວທົ່ວຫອດ

ຊົນລະເນດນ້ອຍ ຮ່ຳໜ້າຖຸ່ມແຖວ (ຫຸມພັນ ລັດຕະນະວົງ, 1990).

**ສະຫຼຸບ:** ໜັງສືເລື່ອງນີ້ແມ່ນກຳເນີດຢູ່ໃນລະບອບສັກດີນາ ສະນັ້ນຈຶ່ງມີທັດສະນະຈຸດອ່ອນທີ່ຍັງຄົງຄ້າງຢູ່ຄື: ຜູ້ແຕ່ງສ່ວນຫຼາຍແມ່ນປັນຍາຊົນທີ່ກຳເນີດຈາກວັດ ແລະ ຊົນຊັ້ນສັກດີນາ ສະນັ້ນທັດສະນະ ແລະ ແນວຄິດຂອງນັກແຕ່ງຈຶ່ງຕິດພັນກັບສາສະໜາພຸດ ແລະ ຊົນຊັ້ນສັກດີນາ ນັກແຕ່ງຈະໃຊ້ແນວຄິດແບບຢູ່ຕາມວັດອາເພາະວ່າວັດຈະເປັນບ່ອນທີ່ປິ່ນປົວຄົນ ດັ່ງນັ້ນ ການແຕ່ງມີປະເພດຢາວິເສດມາປິ່ນປົວ. ວັດຍັງເປັນບ່ອນສຶກສາຮ່ຳຮຽນ ແລະ ເປັບ່ອນທີ່ເພິ່ງທາງໃຈຂອງປະຊາຊົນ. ສະນັ້ນ, ເຮົາຈຶ່ງມີການເຊື່ອຖືຕະຫຼອດມາ.

ນອກຈາກນີ້ແລ້ວ ໜັງສືເລື່ອງນີ້ ຍັງໄດ້ສືບທອດມາຈາກວັນນະຄະດີພື້ນເມືອງລາວ ເຖິງວ່າຈະມີຈຸດອ່ອນບາງຢ່າງແຕ່ໜັງສືເລື່ອງນີ້ກໍເປັນວັນນະຄະດີຂອງຊາດ ມີຄວາມສຳຄັນໃນດ້ານການສຶກສາອົບຮົມ, ມີທີ່ຕັ້ງໜັກໜັ້ນ, ມີນ້ຳໃຈຄຽດແຄ້ນຕໍ່ກຳລັງອະທຳ, ເປັນບົດເລື່ອງທີ່ສືບທອດ ແລະ ເອົາເປັນແບບຢ່າງໄດ້ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ວິເຄາະຕົວລະຄອນ
- ສິລະປະໃນການແຕ່ງ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

- ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ທຸມພັນ ລັດຕະນະວົງ. (1990) ທ້າວຈັນທະຄາດ. ກຳມະການວິທະຍາສາດສັງຄົມ. ສະຖາບັນຄົ້ນຄວ້າສິລະປະ ວັນນະຄະດີ ແລະອັກສອນສາດ.

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ